Buddhist Council of NSW
Working for the Buddhist Community

# ການຕອບຮັບຕໍ່ຖະແຫຼງການອູລູຣູຈາກຫົວໃຈ

*ຂຽນໂດຍຜູ້ຕາງໜ້າຂອງພຸດທະສາສະນິກຊົນທີ່ຫຼາກຫຼາຍ ທີ່ກອງປະຊຸມຝຶກອົບຮົມເຊິ່ງເປັນປະທານ*
*ໂດຍ ພຸດທະສະພາ ແຫ່ງລັດ NSW ທີ່ Sydney ໃນວັນທີ 2 ກັນຍາ 2023.*

**ຄໍາເຊື້ອເຊີນ**
ຢູ່ໃນຖະແຫຼງການອູລູຣູຈາກຫົວໃຈ ຊົນເຜົ່າພື້ນເມືອງດັ້ງເດີມຂອງອອສເຕຣເລັຍຮຽກຮ້ອງໃຫ້ມີ ສຽງ ທີ່ຖືກບັນຍັດໄວ້ຢູ່ໃນລັດຖະທໍາມະນູນ, ການເລົ່າຄວາມຈິງກ່ຽວກັບປະວັດສາດຂອງອອສເຕຣເລັຍ ແລະ ຂັ້ນຕອນຂອງການຕົກລົງກັນລະຫວ່າງບັນດາລັດຖະບານອອສເຕຣເລັຍ ແລະບັນດາຊົນເຜົ່າພື້ນເມືອງດັ້ງເດີມ. ພວກເຂົາເຈົ້າເຊື້ອເຊີນໃຫ້ພວກເຮົາຍ່າງຄຽງຄູ່ໄປກັບພວກເຂົາເຈົ້າດ້ວຍບາດກ້າວການເຄື່ອນໄຫວຂອງຄົນອອສເຕຣລຽນເພື່ອອະນາຄົດທີ່ດີຂຶ້ນ.

**ປະວັດສາດຂອງພວກເຮົາ**
ຊົນເຜົ່າພື້ນເມືອງດັ້ງເດີມຂອງອອສເຕຣເລັຍແມ່ນວັດທະນະທໍາທີ່ຍັງສືບຕໍ່ແລະເກົ່າແກ່ທີ່ສຸດໃນໂລກ, ໂດຍການ ອາໄສຢູ່ນະທີ່ນີ້ມາເປັນເວລາ ກວ່າຫົກສິບພັນປີແລ້ວ. ນັບແຕ່ 1788 ເປັນຕົ້ນມາ ຜົນກະທົບຈາກການລ່າຫົວເມືອງຂຶ້ນ - ການລ້າງເຜົ່າພັນ, ການເຂົ້າໄປຄອບຄອງດິນແດນຂອງເຂົາເຈົ້າ, ການພາກເອົາລູກໆຂອງເຂົາເຈົ້າໄປແບບບັງຄັບ ແລະ ການຫ້າມປາມບໍ່ໃຫ້ປະຕິບັດຕາມຮີດຄອງປະເພນີ ແລະ ພາສາ ຂອງເຂົາເຈົ້າ - ສືບຕໍ່ສົ່ງຜົນກະທົບຕໍ່ຕົວເຂົາເຈົ້າ, ຄອບຄົວ ແລະ ຊຸມຊົນຂອງເຂົາເຈົ້າ. ໂດຍປາສະຈາກສົນທິສັນຍາໃດໆລະຫວ່າງຜູ້ຮຸກຮານແລະຊົນເຜົ່າພື້ນເມືອງດັ້ງເດີມ, ດິນແດນທົ່ວແຄວັນຕ່າງໆກໍບໍ່ເຄີຍໄດ້ຖືກຍອມຍົກໃຫ້. ໃນຂະນະທີ່ເຂົາເຈົ້າຢູ່ໃນສະພາບທີ່ຍືດຢຸ່ນທົນທານ, ໂດຍການຮັກສາຮີດຄອງປະເພນີຂອງຕົນ, ຟື້ນຟູພາສາຂອງຕົນ ແລະ ກໍ່ຮ້າງສ້າງຕົວຢູ່ໃນປະເທດອອສເຕຣເລຍແບບສະໄໝໃໝ່, ຊົນເຜົ່າພື້ນເມືອງດັ້ງເດີມຫຼາຍໆຄົນກໍຍັງຄົງຖືກເຂັ່ຍໃຫ້ຢູ່ນອກຂອບ ແລະ ຍັງຖືກແບ່ງແຍກ ແລະ ຈໍາແນກເຊື້ອຊາດແບບເປັນລະບົບ, ເຊິ່ງສົ່ງຜົນໃຫ້ເກີດມີຄວາມເລວຮ້າຍຂຶ້ນໃນດ້ານສຸຂະພາບ, ການສຶກສາ ແລະ ຄວາມສົມບູນພູນສຸກ ແລະ ມີອັດຕາຄົນຖືກຈໍາຄຸກທີ່ມີຈໍານວນ ສູງຢ່າງບໍ່ສົມດູນ.

**ຄວາມຫຼາກຫຼາຍໃນດ້ານວັດທະນະທໍາຂອງພວກເຮົາ**
ພຸດທະສາສະນິກຊົນຂອງອອສເຕຣເລັຍ ມາຈາກຫຼາຍດິນແດນແລະເວົ້າຫຼາຍພາສາ. ພວກເຮົາຫຼາຍໆຄົນແມ່ນເຂົ້າມາປະເທດອອສເຕຣເລັຍໃນນາມອົບພະຍົບຫຼືຍົກຍ້າຍຖິ່ນຖານຍ້ອນໄພເສດຖະກິດ, ໄດ້ພັດພາກຈາກບ້ານເມືອງນອນຂອງພວກເຮົາເພື່ອກໍ່ຮ້າງສ້າງຕົວແລະຮັກສາຮີດຄອງປະເພນີຂອງພວກເຮົາຢູ່ໃນດິນແດນທີ່ພວກເຮົາເອີ້ນວ່າແມ່ນບ້ານຂອງພວກເຮົາ. ພວກເຮົາອາດຈະມີໂອກາດນ້ອຍໃນການເຂົ້າໄປກ່ຽວພັນກັບຄົນອອສເຕຣລຽນທີ່ເປັນຊົນເຜົ່າພື້ນເມືອງ ແຕ່ວ່າ ພວກເຮົາກໍຮູ້ດີວ່າຄວາມຮູ້ສຶກເປັນແນວໃດເມື່ອຂາດສຽງແລະເປັນຄົນແປກໜ້າຢູ່ໃນດິນແດນຂອງຕົນເອງ.

**ຄ່ານິຍົມຂອງຊາວພຸດພວກເຮົາ**
ພວກເຮົາຂໍສະແດງຄວາມຮູ້ບຸນຄຸນຕໍ່ຂອງຂວັນທີ່ຊົນເຜົ່າພື້ນເມືອງດັ້ງເດີມຂອງອອສເຕຣເລັຍໄດ້ແບ່ງປັນກັບພວກເຮົາ: ວັດທະນະທໍາຂອງເຂົາເຈົ້າ, ການຜູກພັນເຊື່ອມຕໍ່ກັບມາຕຸພູມແລະພັນທະຕໍ່ຄອບຄົວແລະຊຸມຊົນ. ພວກເຮົາຮູ້ສຶກຮູ້ບຸນຄຸນຕໍ່ການໃຫ້ອະໄພຂອງເຂົາເຈົ້າໃນສິ່ງທີ່ພວກເຮົາໄດ້ເຮັດຜິດພາດມາທັງໃນອະດີດແລະປັດຈຸບັນ. ພວກເຮົາຍອມຮັບເອົາຄວາມຄ້າຍຄືຂອງຄ່ານິຍົມໃນຄວາມຮັກ-ຄວາມເມດຕາ, ກະລຸນາ ແລະ ມຸທິຕາ, ການຍອມຮັບຂອງພວກເຮົາໃນການຜູກພັນກັນຢ່າງເລິກເຊິ່ງຂອງສິ່ງທັງປວງ, ແລະຄວາມປະພຶດທີ່ພ້ອມດ້ວຍການມີສະຕິແລະການສະດັບຮັບຟັງຢ່າງຕັ້ງອົກຕັ້ງໃຈ. ນອກນີ້ ພວກເຮົາກໍຍອມຮັບຄວາມຈໍາເປັນທີ່ຕ້ອງເລົ່າຄວາມຈິງ ເພື່ອໃຫ້ພວກເຮົາສາມາດມາຮ່ວມກັນເພື່ອແກ້ໄຂຄວາມບໍ່ຍຸຕິທໍາ ແລະປິ່ນປົວຮັກສາຄວາມເຈັບປວດທໍລະມານໃຫ້ຫາຍຂາດ ສໍາລັບພວກເຮົາໝົດທຸກຄົນທີ່ເອີ້ນປະເທດອອສເຕຣເລັຍວ່າແມ່ນບ້ານຂອງພວກເຮົາ.

**ການຕອບຮັບຂອງຊາວພຸດ**
ພວກເຮົາຮັບເອົາຄໍາເຊື້ອເຊີນດ້ວຍຄວາມກະຕັນຍູ ໃຫ້ຍ່າງຄຽງຄູ່ກັນໄປເພື່ອສ້າງປະເທດອອສເຕຣເລັຍເຊິ່ງມີຊົນເຜົ່າພື້ນເມືອງດັ້ງເດີມແລະຄົນອອສເຕຣລຽນທີ່ບໍ່ແມ່ນຊົນເຜົ່າພື້ນເມືອງໃຫ້ມາຮ່ວມກັນຢູ່ໃນສັງຄົມທີ່ມີຄວາມ ຍຸຕິທໍາແລະສາມັກຄີປອງດອງກັນເພື່ອຜົນປະໂຫຍດຂອງທຸກໆຄົນ. ພວກເຮົາຕັ້ງຕາລໍຄອຍການບໍາບັດຮັກສາທີ່ຈະ ໄດ້ມາຈາກການຊໍາລະອະດີດແລະປັດຈຸບັນຂອງອອສເຕຣເລັຍ. ພວກເຮົາສະໜັບສະໜູນ ສຽງສໍາລັບຊົນເຜົ່າພື້ນເມືອງດັ້ງເດີມ, ເພື່ອພວກເຮົາທຸກຄົນຈະສາມາດໄດ້ຮັບຜົນປະໂຫຍດຈາກພູມປັນຍາແລະປະສົບການທີ່ຄົງຢູ່ຂອງເຂົາເຈົ້າ ແລະການຜູກພັນເຊື່ອມຕໍ່ແລະຄວາມເຂົ້າໃຈຕໍ່ໂລກຂອງທໍາມະຊາດ ໃນຂະນະທີ່ພວກເຮົາກໍາລັງປະເຊີນໜ້າກັບວິກິດການຄວາມປ່ຽນແປງຂອງດິນຟ້າອາກາດ ແລະລະບົບນິເວດໃນຊ່ວງຊີວິດຂອງພວກເຮົາ.

**ຂໍໃຫ້ສິ່ງທີ່ມີຊີວິດທັງປວງຈົ່ງໄດ້ຮັບຄວາມສຸກ ແລະ ສິ່ງທີ່ນໍາມາເຊິ່ງຄວາມສຸກ**